# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 15 ເມສາ 2018 (4-15-2018)

## ຄວາມຊອບທັມຂອງພວກເຮົາ

ຂະນະທີ່ທ່ານຍັງເປັນເດັກນ້ອຍຢູ່, ແມ່ນຫຍັງໄດ້ເຮັດໃຫ້ທ່ານເວົ້າວ່າ "ມັນບໍ່ຍຸດຕິທັມ"

**ຈຸດສໍາຄັນໃນບົດຮຽນ:** ເພາະວ່າພຣະເຈົ້າຊົງຊອບທັມ, ເປົ້າໝາຍຍິ່ງໃຫຍ່ສູງສຸດຄືພຣະອົງຈະເຮັດທຸກຢ່າງໃຫ້ຖືກຕ້ອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າມີຫຼານສິບຄົນ, ແລະຂ້າພະເຈົ້າພົບຕົວເອງຢູ່ໃນການຫລິ້ນໄປຫຼິ້ນມາອັນເກົ່າທີ່ພໍ່ຂອງຂ້າພະເຈົ້າໄດ້ເວົ້າຕໍ່ຂ້າພະເຈົ້າ. ຍົກຕົວຢ່າງ ບາງຄັ້ງຂ້າພະເຈົ້າຈະໄດ້ຍິນຜູ້ນຶ່ງໃນພວກເຂົາມີການຈົ່ມກ່ຽວກັບບາງຢ່າງທີ່ໄດ້ເກີດຂຶ້ນໃນໂຮງຮຽນ, ແລະຂ້າພະເຈົ້າຈະໄດ້ຍິນວ່າ: "ມັນຊ່າງບໍ່ຍຸດຕິທັມ!" ໃນຂນະນັ້ນເອງ, ຂ້າພະເຈົ້າຍັງໄດ້ຍິນສຽງັ້ນກ້ອງຢູ່ໃນຫູເຖິງສິ່ງທີ່ພໍ່ໄດ້ກ່າວຕໍ່ຂ້າພະເຈົ້າວ່າ: "ນີ້ໃຜເວົ້າວ່າຊີວິດຈະຍຸດຕິທັມສເມີໄປ?"

ຂ້າພະເຈົ້າກໍາລັງເດົາວ່າທ່ານກໍຄົງໄດ້ຍິນຢ່າງນີ້ເໝືອນກັນ. ແລະຖ້າທ່ານເປັນພໍ່ແມ່, ຂ້າພະເຈົ້າກໍາລັງເດົາເອົາວ່າທ່ານໄດ້ເວົ້າແບບນັ້ນດ້ວຍ.

ຊີວິດບໍ່ຍຸດຕິທັມ! ມັນເປັນຕາໃຈຮ້າຍເມື່ອພວກເຮົາເຫັນຄົນທີ່ມີຄຸນສົມບັດຕໍ່າແລະດ້ານສິນທັມກໍໃຊ້ການບໍ່ໄດ້ແຕ່ປາກົດວ່າເຂົາກ້າວໜ້າກວ່າໃນຊີວິດ; ໃນຂນະດຽວກັນ, ພວກທີ່ສແວງຫາໃນການເຮັດໃນສິ່ງຖືກຕ້ອງສ່ວນຫຼາຍແລ້ວແມ່ນຕົກຢູ່ຂ້າງຫຼັງ. ເຫດການແບບນີ້ອາດຈະເຮັດໃຫ້ພວກເຮົາຄິດໄປວ່າພຣະເຈົ້າບໍ່ຍຸດຕິທັມ. ເປັນຫັຍງພຣະອົງຈຶ່ງບໍ່ລົງໂທດພວກອະທັມແລະໃຫ້ລາງວັນແກ່ພວກທີ່ຊອບທັມ?

ພວກເຮົາບໍ່ແມ່ນພວກທໍາອິດທີ່ຕັ້ງຄໍາຖາມນັ້ນ. ພຣະເຈົ້າໄດ້ສະແດງຕໍ່ພວກເຮົາຫຼວງຫຼາຍກ່ຽວກັບພຣະອົງເອງໂດຍຜ່ານຜູ້ທໍານວາຍເຢເຣມີຢາ. ໃນພຣະທັມເຢເຣມີຢາ 33, ພຣະເຈົ້າເປີດເຜີຍພຣະອົງເອງໃນຖານະຄວາມຊອບທັມຂອງພວກເຮົາ; ໃນການເຮັດຢ່າງນັ້ນ, ພຣະອົງຊ່ວຍພວກເຮົາໃຫ້ຈັດການກັບຕອນ "ບໍ່ຍຸດຕິທັມ" ເຫຼົ່ານັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3 )**

### ການສຶກສາພຣະຄັມພີ

**1. <u>ເຢເຣມີຢາ 33:3-5</u>**

*3. ຈົ່ງທູນເຮົາ ແລະເຮົາຈະຕອບເຈົ້າ ແລະຈະບອກສິ່ງທີ່ໃຫຍ່ຍິ່ງແລະທີ່ລີ້ຊ່ອນຢູ່ ຊຶ່ງເຈົ້າບໍ່ຮູ້ນັ້ນໃຫ້ແກ່ເຈົ້າ. 4. ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນໄດ້ກ່າວດັ່ງນີ້ກ່ຽວດ້ວຍເຣື່ອງບ້ານໃນກຸງນີ້ ແລະພຣະຣາຊວັງຂອງບັນດາກະສັດແຫ່ງຢູດາ ຊຶ່ງຖືກຮື້ລົງ ເພື່ອທໍາການຕໍ່ຕ້ານກອງດິນແລະດາບ. 5. ເຂົາທັງຫລາຍຈະມາຮົບກັບຊາວຄັນເດອານ ແລະທໍາໃຫ້ຄົນເປັນສົບໄປເຕັມບ້ານເຕັມເຮືອນ ເປັນຄົນທີ່ເຮົາສັງຫານດ້ວຍຄວາມກິ້ວ ແລະຄວາມພິໂຣດຂອງເຮົາ ເພາະໄດ້ຫັນໜ້າຂອງເຮົາໜີຈາກກຸງນີ້ເຫດດ້ວຍຄວາມອະທັມຂອງເຂົາທັງຫລາຍ.*

ເກືອບຮອດຮ້ອຍປີຫຼັງຈາກອັສຊີເຣັຽໄດ້ຍຶດເອົາສິບຕະກຸນທາງພາກເໜືອຂອງອິສຣາເອນໄປເປັນຊະເລີຍ (ເບິ່ງ 2 ກະສັດ 17:6-18), ຢູດາກໍອີກພົບຕາດຽວກໍຈະຫຼົ້ມຈົມເຊັ່ນກັນ. ເຢເຣມີຢາເປັນກະບອກສຽງຂອງພຣະເຈົ້າໃນລະຍະ

ຕອນປາຍຂອງການອຶກກະທຶກຫວຸ້ນວາຍ. ການຮັບໃຊ້ຂອງທ່ານໄດ້ເລີ່ມຕົ້ນລະຫວ່າງການປົກຄອງຂອງກະສັດໂຮເຊອາຊຶ່ງເປັນກະສັດທີ່ດີ, ຜູ້ຊຶ່ງຕິດໃຈຢ່າງເລິກເຊິ່ງເມື່ອໄດ້ຄົ້ນຄວ້າພຣະຄຳຂອງພຣະເຈົ້າໃໝ່. ຜົນອອກມາກໍຄືໂຮເຊອາໄດ້ຈັດຕັ້ງໂຮງທັມມະເທສນາຂຶ້ນໃໝ່ແລະປັບປຸງການນະມັສການ. (ເບິ່ງ 22:8-13; 23:4-25.) ແຕ່ກໍໜ້າເສັຍດາຍ, ການຟື້ນຟູແລະປັບປຸງຂຶ້ນໃໝ່ທີ່ໄດ້ເກີດຂຶ້ນໃນລະຫວ່າງການປົກຄອງຂອງທ່ານໂຮເຊອາໄດ້ຈົບລົງຢ່າງກະທັນຫັນຫຼັງຈາກການຕາຍຢ່າງບໍ່ຄາດຝັນຂອງກະສັດໜຸ່ມ. (ເບິ່ງ 23:29-30.) ຝ່າຍຈິດວິນຍານກໍລົດໜ້ອຍຖອຍລົງຊຶ່ງນຳໄປສູ່ການເປື່ອຍເໜົ່າທາງສິນທັມຢ່າງກະທັນຫັນແລະການກົດຂີ່; ການອຶກລະທຶກຫວຸ້ນວາຍແລະດ້ານການເມືອງບໍ່ໝັ້ນຄົງນັ້ນຄືສະພາບການໃນຕອນນັ້ນ.

ພວກເຮົາມາເລີ້ມເຣື່ອງກັບປະມານສິບສອງປີກວ່າງຫຼັງຈາກນັ້ນ, ລະຫວ່າງການປົກຄອງຂອງກະສັດເຊເດກີຢາ. ກະສັດເນບູກາດເນັດຊາແຫ່ງກຸງບາບີໂລນມີເປົ້າໝາຍຕົ້ນຕໍທີ່ຈະລົງໂທດຊາວຢູດາ. ທ່ານເຊເດກີຢາໄດ້ສົ່ງປະໂຣຫິດສອງຄົນໃຫ້ໄປຖາມຜູ້ທຳນວາຍເຢເຣມີຢາໃຫ້ທູນຕໍ່ພຣະຜູ້ເປັນເຈົ້າຕາງໜ້າພວກເຂົາ. (ເບິ່ງ ຢຣມ 21:2.) ຄຳຕອບຈາກຜູ້ທຳນວາຍກໍເປັນຄຳເຕືອນທີ່ບໍ່ຄາດຄິດ: ພຣະເຈົ້າຈະໃຊ້ພວກຄັນເດອານເພື່ອນຳການພິພາກສາມາສູ່ໄພ່ພົນຂອງພຣະອົງ. (ເບິ່ງຂໍ້ 4-7.) ພຣະຜູ້ເປັນເຈົ້າໄດ້ເຊື້ອເຊີນຊາວຢູດາໃຫ້ສະແດງຄວາມສາລະພາບແລະຈະຖືກົປົວແປງຄືນໃໝ່ (ເບິ່ງຂໍ້ 3-4), ແຕ່ວ່າທ່ານເຊເດກີຢາແລະພວກປະຊາຊົນໄດ້ພາກັນເມີນເສີຍຕໍ່ຄຳເຕືອນຂອງຜູ້ທຳນວາຍ ແລະປະຕິເສດຕໍ່ຄວາມດີຂອງພຣະຜູ້ເປັນເຈົ້າ. ທ່ານເຊເດກີຢາໄດ້ຈັບທ່ານເຢເຣມີຢາໃສ່ຄຸກຂັງໄວ້ທີ່ເດີ່ນບ້ານຂອງຄົນເຝົ້າຍາມ, ເຫດຜົນກໍຄືເພື່ອປິດປາກຜູ້ທຳນວາຍ. ທ່ານເຢເຣມີຢາໄດ້ບອກກະສັດເຊເດກີຢາວ່າເພິ່ນຈະໄດ້ພົບກັບກະສັດເນບູກາດເນັດຊາໜ້າຕໍ່ໜ້າເພາະວ່າເພິ່ນຈະຖືກຈັບໄປເປັນຊະເລີຍທີ່ກຸງບາບີໂລນ. (ເບິ່ງ 32:1-5.)

| |
|---|
| ແມ່ນຫຍັງທີ່ເຮັດໃຫ້ທ່ານຈັບຈຸດສົນໃຈກ່ຽວກັບຄຸນສົມບັດຂອງພຣະເຈົ້າໃນຂໍ້ພຣະຄຳເຫຼົ່ານີ້? |

ພວກຊາວຢູດາຕ້ອງສັບສົນເທກ່ຽວກັບຄວາມຢາກເຂົ້າໃຈຄຳກ່າວຂອງທ່ານເຢເຣມີຢາໃນແສງສະວ່າງຂອງຄຳສັນຍາຕ່າງໆຂອງພຣະເຈົ້າແລະເປົ້າໝາຍຕ່າງໆສຳລັບໄພ່ພົນຂອງພຣະອົງເອງ. ພຣະເຈົ້າໄດ້ສັນຍາແລະສ້າງຕັ້ງບັນລັງຂອງດາວິດຕລອດໄປແມ່ນບໍ່? (ເບິ່ງ 2 ຊາມູເອນ 7:10-16.) ເຖິງປານນັ້ນໄພ່ພົນກໍໄດ້ນຳສິ່ງເຫຼົ່ານີ້ສູ່ເຂົາເຈົ້າເອງໂດຍຜ່ານການບໍ່ເຊື່ອຟັງຄວາມແລະຄວາມບາບຂອງພວກເຂົາເຈົ້າເອງ.

ພຣະເຈົ້າຕີສອນພວກເຮົາກໍຄືກັນກັບທີ່ພຣະອົງໄດ້ຕີສອນຊາວຢູດາ, ແຕ່ວ່າເປົ້າໝາຍຂອງພຣະອົງແມ່ນນຳພວກເຮົາກັບມາຫາພຣະອົງເອງ ແລະຫຍັບເຂົ້າເດີນໃກ້ພຣະອົງຍິ່ງຂຶ້ນ. ພຣະເຈົ້າເຊີນຊວນພວກເຮົາໃຫ້ຮ້ອງຫາພຣະອົງ. ພວກເຮົາພົບຄຳຕອບທີ່ພວກເຮົາຊອກຫາແລະຄວາມຫວັງທີ່ພວກເຮົາຕ້ອງການເມື່ອພວກເຮົາຫາກຮ້ອງຫາພຣະອົງ. ຕໍ່ຈາກນັ້ນພຣະອົງກໍເປີດເຜີຍຕໍ່ພວກເຮົາເຖິງຄວາມຍິ່ງໃຫຍ່ແລະບໍ່ສາມາດເຂົ້າໃຈໄດ້ໃນສິ່ງທີ່ພວກເຮົາບໍ່ຮູ້ຈັກ.

ສິ່ງທີ່ພວກເຮົາ "ບໍ່ສາມາດເຂົ້າໃຈໄດ້" ພຣະເຈົ້າຈະເປີດເຜີຍກໍໄດ້ເຕືອນພວກເຮົາວ່າຄວາມຮູ້ຂອງພວກເຮົາມີຂອບເຂດຈຳກັດແຕ່ວ່າຄວາມຮູ້ຂອງພຣະເຈົ້າບໍ່ມີຂອບເຂດຈຳກັດ. ພຣະເຈົ້າຢາກຕອບຄຳອ້ອນວອນອະທິຖານຂອງໄພ່ພົນຂອງພຣະອົງ, ແຕ່ວ່າພວກເຮົາຕ້ອງຮ້ອງຫາພຣະອົງກ່ອນ.

ທ່ານເຢເຣມີຢາມີພຣະຄຳຂອງພຣະເຈົ້າທີ່ເໜືອກວ່າບົດລະຄອນນັ້ນອີກ. ພຣະເຈົ້າຈະຍົກກິ່ງກ້ານທີ່ຊອບທັມຂຶ້ນຈາກເຊື້ອສາຍຂອງດາວິດ, ກະສັດອົງນີ້ງຊຶ່ງຈະນຳການພິພາກສາແລະຍຸດຕິທັມມາສູ່ໂລກ. ພຣະອົງຈະຖືກຮ້ອງວ່າ "ພຣະຜູ້ເປັນເຈົ້າເປັນຄວາມຊອບທັມຂອງພວກເຮົາ" (ຢຣມ 23:6).

## 2. <u>ເຢເຣມີຢາ 33:6-8</u>

*6. ເຮົາຈະນຳການປິ່ນປົວແລະຮັກສາມາໃຫ້ ແລະເຮົາຈະຮັກສາເຂົາທັງຫຼາຍໃຫ້ຫາຍແລະປະກາດສັນຕິພາບແລະຄວາມໝັ້ນຄົງຢ່າງອຸດົມ. 7. ເຮົາຈະໃຫ້ຢູດາແລະອິສຣາເອນກັບສູ່ສະພາບເດີມ ແລະສ້າງເຂົາທັງຫຼາຍເສັຽໃໝ່ຢ່າງທີ່ເຂົາເປັນມາແຕ່ເດີມນັ້ນ. 8. ເຮົາຈະຊຳຣະເຂົາຈາກໂທດບາບຂອງເຂົາຊຶ່ງມີຕໍ່ເຮົາ ແລະຈະໃຫ້ອະພັຍໂທດບາບແລະການກະບົດຕໍ່ເຮົາ.*

ຂ່າວບໍ່ດີນັ້ນກໍໄດ້ຖືກປົດບັງໂດຍຂ່າວດີທີ່ໄດ້ຕາມມາ. ດຽວນີ້ພຣະເຈົ້າກໍຈະເພີ້ມຄວາມເມດຕາແກ່ພວກເຂົາເຈົ້າ ຄວາມເມດຕາທີ່ກໍ່ເຫດໃຫ້ມີສຸຂພາບດີ, ການປິ່ນປົວຮັກສາໃຫ້ຫາຍ, ແລະສັນຕິສຸກອັນມະຫາສານແລະຄວາມຈິງ. ທັງຊາວຢູດາແລະຊາວອິສຣາເອນຈະຖືກນຳກັບຈາກການເປັນຊະເລີຍແລະຈະເປັນນຶ່ງດຽວກັນອີກ.

ແຕ່ວ່າຂ່າວດີທີ່ສຸດກວ່າສິ່ງອື່ນໆແມ່ນວ່າພຣະເຈົ້າຈະກຳຈັດບາບຂອງພວກເຂົາເຈົ້າ. ພຣະເຈົ້າເອງຈະເປັນຜູ້ນຳເອົາສຸຂພາບທີ່ດີ, ການຢຽວຢາໃຫ້ຫາຍ, ແລະອະດີດຄວາມທຸກທໍຣະມານຂອງຄົນກໍຈະຖືກຕອບແທນໂດຍ "ສັນຕິສຸກອັນແທ້ຈິງຢ່າງມະຫາສານ." ປໂຍກທີ່ບໍ່ທັມມະດາອັນນີ້ແນະນຳເຖິງສັນຕິສຸກຕລອດໄປເປັນນິດ.

ພຣະເຈົ້າຍັງໃຫ້ສັນຍາຕໍ່ໄພ່ພົນຂອງພຣະອົງອີກວ່າຈະໄດ້ທວນກັບຄືນມາຫາແຜ່ນດິນຂອງພວກເຂົາເຈົ້າແລະຈະສ້າງປະເທດຄືນໃໝ່ເໝືອນດັ່ງແຕ່ກ່ອນໆທີ່ສອງອານາຈັກຈະຖືກແບ່ງແຍກ. ຂະນະທີ່ການພິພາກສາຂອງພຣະເຈົ້າຕໍ່ຄວາມບາບແມ່ນເປັນທັມ. ຄວາມເມດຕາແລະຄວາມດີຂອງພຣະອົງແມ່ນມີຢ່າງຫຼວງຫຼາຍ. ການເສີມສ້າງໄພ່ພົນຂອງພຣະອົງຂື້ນໃໝ່ກໍຈະສຳເຣັດຜົນ.

| |
|---|
| ທ່ານມີປະສົບການກ່ຽວກັບການຖືກສ້າງຂຶ້ນໃໝ່ຂອງພຣະເຈົ້າຢ່າງໃດ? |

ຈຸດສຸດຍອດຂອງຂ່າວດີອັນນີ້ແມ່ນຢູ່ໃນຄຳສັນຍາທີ່ພຣະເຈົ້າຈະກຳຈັດກັບບັນຫາຄວາມຜິດບາບຂອງພວກເຂົາເຈົ້າ. ພຣະຜູ້ເປັນເຈົ້າໄດ້ໃຊ້ຄຳເວົ້າສາມຄຳໃນການບັນລະຍາຍຄວາມຜິດບາບ: **ຄວາມຊົ່ວຮ້າຍ.** ຮາກເຫງົ້າຂອງຄຳນີ້ຢູ່ໃນຄວາມຄິດຂອງການບິດເບືອນຫຼືການເບັດບ້ຽວ. **ຄວາມໄຮ້ສິນທັມ.** ຄຳເວົ້າທີ່ແບ່ງປັນຮາກເຫງົ້າດຽວກັນໃນພາສາເຮັບເຣີຊຶ່ງເປັນສິ່ງທີ່ນຶ່ງ, ແຕ່ວ່າມັນນຳຄວາມຄິດຂອງການຜິດເປົ້າໝາຍ. **ການກະບົດ.** ທີ່ມີຄວາມໝາຍວ່າຕໍ່ຕ້ານອຳນາດການປົກຄອງຫຼືລຸກຂຶ້ນຕໍ່ສູ້ໃນຄວາມກົງກັນຂ້າມກັບຜູ້ປົກຄອງ.

ເຖິງແມ່ນວ່າໄພ່ພົນຂອງພຣະເຈົ້າມີການກະບົດ, ຄວາມປະສົງຂອງພຣະອົງກໍຄືຍົກໂທດແລະສ້າງຂຶ້ນໃໝ່. ບັນຫາຄວາມຜິດບາບແລະການກະບົດຂອງພວກເຮົາກໍແມ່ນອັນນຶ່ງທີ່ເຫັນຢູ່ທົ່ວໄປໃນພຣະຄັມພີ, ແຕ່ວ່າຄຽງຄູ່ໄປນັ້ນກໍແມ່ນຄຳພະຍານຄວາມປາຖນາຂອງພຣະເຈົ້າທີ່ຈະໄຖ່ແລະສ້າງຂຶ້ນໃໝ່. ຄວາມຊົ່ວຊ້າຂອງມະນຸດຊາດແມ່ນກະຈ່າງແຈ້ງ, ແຕ່ວ່າຄວາມກະຈ່າງແຈ້ງຢ່າງສເມີກັນນັ້ນກໍຄືການແກ້ໄຂບັນຫາຂອງພຣະເຈົ້າ. ພວກເຮົາກໍຕ້ອງການຄວາມທ່ຽງທັມແລະຖືກຕ້ອງ. ພວກເຮົາຕ້ອງການຊີວິດໃຫ້ໄປໃນທາງທີ່ດີ ແລະພຣະເຈົ້າກໍເຊັ່ນດຽວກັນ! ເຖິງປານນັ້ນໃນຊ່ວງເວລາເຫຼົ່ານັ້ນເມື່ອເບິ່ງຄືວ່າຊີວິດບໍ່ເປັນທັມຫຼືຖືກຕ້ອງ, ພວກເຮົາຄວນຈຳໄວ້ວ່າພຣະເຈົ້າຍັງກະທຳການຢູ່!

## 3. <u>ເຢເຣມີຢາ 33:14-16</u>

14. *"ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ວັນນັ້ນຈະມາເຖິງ ຄືເມື່ອເຮົາຈະໃຫ້ຄຳສັນຍາທີ່ເຮົາຈະກະທຳໄວ້ຕໍ່ເຊື້ອສາຍອິສຣາເອນແລະເຊື້ອສາຍຂອງຢູດາສຳເຣັດ. 15. ໃນວັນເຫຼົ່ານັ້ນແລະໃນເວລານັ້ນ ເຮົາຈະໃຫ້ຍອດແຫ່ງຄວາມຊອບທັມເກີດມາເພື່ອດາວິດ ແລະທ່ານຈະໃຫ້ຄວາມຍຸດຕິທັມແລະຄວາມຊອບທັມໃນແຜ່ນດິນນັ້ນ. 16. ໃນການຄັ້ງນັ້ນ ຢູດາຈະໄດ້ຮັບການຊ່ອຍໃຫ້ລອດແລະເຢຣູຊາເລັມຈະອາສັຍຢູ່ຢ່າງໝັ້ນຄົງ ແລະນີ້ເປັນຊື່ຊຶ່ງເຂົາຈະເອີ້ນເມືອງນັ້ນຄື "ພຣະຜູ້ເປັນເຈົ້າຊົງເປັນຄວາມຊອບທັມຂອງເຮົາ."*

ໂດຍການປະກາດ, "ເບິ່ງແມ, ວັນນັ້ນຈະມາເຖິງ," ທ່ານເຢເຣມີຢາໄດ້ກ່າວວ່າເວລາໃກ້ຈະເຖິງເງື່ອນມືແລ້ວເມື່ອປະຊາຊົນຈະເຫັນຄວາມສຳເຣັດຂອງ "ຄຳສັນຍາທີ່ດີ" ສຳລັບຊາວອິສຣາເອນແລະຊາວຢູດາ. ຄຳສັນຍາທີ່ກ່ຽວກັບການສ້າງເຊື້ອສາຍຂອງກະສັດດາວິດຂຶ້ນໃໝ່. ພຣະເຈົ້າຈະກະທຳໃນສິ່ງຖືກຕ້ອງ!

ຄວາມຊອບທັມບໍ່ແມ່ນພຽງແຕ່ເປັນຄຳບັນລະຍາຍ ພຣະອົງເປັນບຸກຄົນ! "ພຣະຜູ້ເປັນເຈົ້າເປັນຄວາມຊອບທັມຂອງພວກເຮົາ." ພຣະເຈົ້າຈະ "ເປັນຕົ້ນເຫດໃຫ້ກິ່ງງ່າທີ່ຊອບທັມໃຫ້ປົ່ງຂຶ້ນສຳລັບທ່ານດາວິດ," ຜູ້ຊຶ່ງ "ເປັນຜູ້ປົກຄອງທ່ຽງທັມແລະຄວາມຊອບທັມຈະມີຂຶ້ນໃນແຜ່ນດິນ." ແນ່ນອນ, "ກິ່ງງ່າທີ່ຊອບທັມນີ້" ໄດ້ເລັງເຖິງໃສ່ພຣະເມຊີອາທີ່ຈະສະເດັດມາ.

| |
|---|
| ຄຳສັນຍາທຸກໆອັນໃນຂໍ້ພຣະຄຳເຫຼົ່ານີ້ໄດ້ຊີ້ໄປຫາພຣະເຢຊູຢ່າງໃດ? |

ພຣະນາມຂອງພຣະເຈົ້າທີ່ຢັ້ງຢືນຄຸນສົມບັດອັນຊອບທັມຂອງພຣະອົງຈະກາຍເປັນຊື່ຂອງເຢຣູຊາເລັມ ເພາະວ່າເມືອງນີ້ຈະເອົາຊື່ຈາກຄຸນສົມບັດຂອງພຣະອົງ. ເຢຣູຊາເລັມຈະຖືກສ້າງຂຶ້ນໃໝ່ແລະຈະກາຍເປັນສິ່ງທີ່ພຣະເຈົ້າໄດ້ຕັ້ງພຣະທັຍເອົາໄວ້ສເມີ ເມືອງທີ່ຖືກໝາຍໄວ້ໂດຍຄວາມຊອບທັມ. (ເບິ່ງ ເອຊາຢາ 1:26, 62:2-4; ເຢເຣມີຢາ 3:17.)

ທ່ານໂປໂລໄດ້ກ່າວເຖິງ "ຄວາມຊອບທັມ" ຂອງທ່ານເອງໂດຍບັນລຸຜົນຈາກການປະຕິບັດຕາມພຣະບັນຍັດຢ່າງເຄັ່ງຄັດ. ໃນພຣະຄຣິດ, ທ່ານໄດ້ເຫັນວ່າຄວາມບັນລຸຜົນເຫຼົ່ານັ້ນເປັນເໝືອນຂີ້ເຫຍື້ອລ້າໆ. (ເບິ່ງ ຟີລິບປອຍ 3:4-7.) ເປັນດ້ວຍເຫດໃດອັຄສາວົກທ່ານນີ້ຈຶ່ງຕີລາຄາຄວາມຊອບທັມຂອງຕົນວ່າເປັນເໝືອນຂີ້ເຫຍື້ອ? "ເພາະເຫດພຣະອົງນັ້ນ, ເຮົາຈຶ່ງໄດ້ຍອມສລະສິ່ງສາຣະພັດ ແລະຖືວ່າສິ່ງເຫຼົ່ານັ້ນເປັນເໝືອນຂີ້ເຫຍື້ອ ເພື່ອຈະໄດ້ອົງພຣະຄຣິດມາເປັນປໂຍດແກ່ເຮົາ. ແລະຈະໄດ້ປາກົດຢູ່ໃນພຣະອົງໂດຍບໍ່ມີຄວາມຊອບທັມໃນເຮົາເອງຊຶ່ງໄດ້ມາໂດຍພຣະບັນຍັດ ແຕ່ມີມາໂດຍຄວາມເຊື່ອໃນພຣະຄຣິດ ເປັນຄວາມຊອບທັມທີ່ມາຈາກພຣະເຈົ້າ ຊຶ່ງອາໄສຄວາມເຊື່ອ" (ຟລປ ຂໍ້ 8-9).

ໃນວັນເຫຼົ່ານັ້ນທີ່ຊີວິດມັນບໍ່ໄປໃນທາງຖືກຕ້ອງ, ວາງໃຈເຊື່ອວ່າພຣະເຈົ້າຈະກະທຳການຢ່າງຍິ່ງໃຫຍ່ໃຫ້ທຸກສິ່ງຖືກຕ້ອງ. ພຣະອົງຈະນຳເອົາຄວາມຊອບທັມຂອງພຣະອົງຝັງໃສ່ໃນທຸກສິ່ງ, ຊຶ່ງລວມທັງທຸກໆຊີວິດຂອງພວກທີ່ຕິດຕາມພຣະອົງ.

| |
|---|
| ການກະທຳຕ່າງໆແລະນິສັຍທຸກຢ່າງຂອງພວກເຮົາຈະສະແດງອອກໃຫ້ເຫັນວ່າພວກເຮົາຕິດຕາມພຣະເຈົ້າອົງຊົງເປັນຄວາມຊອບທັມຂອງພວກເຮົາແນວໃດ? |

## ນຳໃຊ້ໃນຊີວິດ

ພຣະເຈົ້າເປັນຄວາມຊອບທັມຂອງພວກເຮົາ. ທ່ານຈະໃຫ້ຄວາມຈິງນັ້ນເຮັດໃຫ້ມີຄວາມແຕກຕ່າງເກີດຂຶ້ນໃນຊີວິດຂອງທ່ານຢ່າງໃດ? ເລືອກເອົາການນຳໃຊ້ໃນຊີວິດຂໍ້ນຶ່ງຕາມຂ້າງລຸ່ມນີ້.

**ສາລະພາບ.** ເພາະວ່າ ພຣະເຈົ້າຊົງຊອບທັມ, ພຣະອົງຢູ່ຫ່າງຈາກຄວາມຜິດບາບ. ຈົ່ງເຂົ້າຮ່ວມຄວາມສັມພັນກັບພຣະອົງ, ຫຼືສ້າງຄວາມສາມັກຄີທັມຂອງທ່ານກັບພຣະອົງອີກໃໝ່, ໂດຍການສາລະພາບຄວາມຜິດບາບຕ່າງໆທີ່ມີໃນຊີວິດຂອງທ່ານ.

**ເຊື່ອວາງໃຈ.** ຊີວິດຈະບໍ່ຍຸດຕິທັມສເມີໄປ. ແມ້ກະທັ້ງເມື່ອມັນຮູ້ສຶກວ່າຝ່າຍທີ່ຜິດໄດ້ຊະນະ. ພຣະເຈົ້າຈະເປັນຜູ້ກ່າວຄຳສຸດທ້າຍ. ໃນຂນະນີ້, ຈົ່ງໄວ້ວາງໃຈພຣະອົງ. ພຣະອົງຮັກທ່ານ, ແລະໃນຄວາມຊອບທັມຂອງພຣະອົງ, ພຣະອົງຈະເຮັດໃນສິ່ງທີ່ຖືກຕ້ອງທຸກຢ່າງ.

**ຢືນຂຶ້ນ.** ແນວໂນ້ມໃນສັງຄົມຂອງພວກເຮົາແມ່ນເຊື່ອວ່າພວກເຮົາສາມາດມີຄຳແປຄວາມໝາຍຂອງຄວາມຊອບທັມຂອງພວກເຮົາເອງ. ແທນທີ່ມັນຈະກາຍເປັນມາດຕະຖານຂອງພວກເຮົາ, ພຣະເຢຊູແມ່ນມາດຕະຖານສຳລັບຄວາມຊອບທັມ. ຢືນຂຶ້ນກັບພຣະອົງແລະເພື່ອພຣະອົງໃນການເຮັດແລະປະກາດໃນສິ່ງທີ່ຖືກຕ້ອງ.

ພວກເຮົາທຸກຄົນຕ່າງກໍມີຕົວຢ່າງຂອງຊີວິດທີ່ບໍ່ຍຸດຕິທັມ. ຂອບຄຸນພຣະເຈົ້າພວກເຮົາຮູ້ຈັກວ່າທຸກສິ່ງຈະຖືກເຮັດໃຫ້ຖືກຕ້ອງໃນເວລາສຸດທ້າຍໂດຍເຢໂຮວາ ຊິເກນູ, ພຣະເຈົ້າຂອງພວກເຮົາຊົງຊອບທັມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນwww.lsbf.org ແປໂດຍ PA**